Public Disclosure Authorized
Public Disclosure Authorized
Public Disclosure Authorized
Public Disclosure Authorized

ບົດວິໄຈການເຊື່ອມໂຍງລະຫວ່າງຂະແໜງບໍລິການ ແລະ ຂະແໜງ ການຜະລິດໃນ ສປປ ລາວ

ບົດສັງລວມຫຍໍ້

ກຸມພາ 2016

WORLD BANK GROUP

Australian Aid

European Union

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Irish Aid
Government of Ireland
Rialtas na hÉireann

USAID
FROM THE AMERICAN PEOPLE

1. ບົດລາຍງານສະບັບນີ້ ມີເປົ້າໝາຍຄົ້ນຄວ້າ ທິດທາງຕ່າງໆທີ່ຂະແໜງບໍລິການໄດ້ປະກອບສ່ວນໃສ່ຂີດຄວາມສາມາດໃນການແຂ່ງຂັນຂອງສປປລາວແລະການເຊື່ອມໂຍງເຂົ້າກັບຕະຫຼາດໂລກ.

ບົດລາຍງານ ໄດ້ສຸມໃສ່ສອງພາລະບົດບາດທີ່ຄຽງຄູ່ກັນຂອງຂະແໜງບໍລິການໃນການປະກອບສ່ວນຄື: ພາລະບົດບາດທຳອິດ, ໃນຖານະເປັນເສັ້ນທາງສຳລັບການສ້າງຄວາມຫລາກຫລາຍຂອງສິນຄ້າສົ່ງອອກ ແລະ ການເຕີບໂຕທາງເສດຖະກິດ, ແລະ ບົດບາດທີສອງ, ການສະໜອງການບໍລິການທີ່ເປັນປັດໃຈການຜະລິດປ້ອນເຂົ້າໃສ່ຂະແໜງການຜະລິດຜົນອື່ນໆໃນລະບົບເສດຖະກິດ ເຊັ່ນ: ຂະແໜງການຜະລິດປຸງແຕ່ງ. ເມື່ອເສດຖະກິດມີການເຕີບໂຕ ໂດຍທົ່ວໄປແລ້ວ ຂະແໜງບໍລິການຈະມີຄວາມສຳຄັນເພີ່ມຂຶ້ນ ແຕ່ມັກຖືກເບິ່ງຂ້າມເລື້ອຍໆ ບົດບາດຂອງຂະແໜງດັ່ງກ່າວໃນຖານະເປັນຕົວອຳນວຍຄວາມສະດວກໃຫ້ຂະແໜງອື່ນໆຂອງເສດຖະກິດໃນການຍົກລະດັບການຜະລິດໃຫ້ດີໄປຕາມຕ່ອງໂສ້ມູນຄ່າ. ຢ່າງໃດກໍ່ດີ, ຂະແໜງບໍລິການ ມີບົດບາດສຳຄັນຫລາຍໃນການເພີ່ມຂີດຄວາມສາມາດການແຂ່ງຂັນຂອງຂະແໜງການອື່ນໆເພື່ອກະຕຸ້ນການເຕີບໂຕຂອງເສດຖະກິດ ແລະ ສ້າງວຽກເຮັດງານທຳທີ່ມີຄຸນະພາບດີກວ່າເກົ່າ.

2. ຂະແໜງບໍລິການຂອງ ສປປ ລາວ ໄດ້ມີການປະກອບສ່ວນທີ່ສຳຄັນເຂົ້າໃສ່ການເຕີບໂຕທາງເສດຖະກິດຕະຫຼອດໄລຍະໜຶ່ງທົດສະວັດຜ່ານມາ ແຕ່ຍັງເປັນການປະກອບສ່ວນທີ່ຕ່ຳກວ່າທ່າແຮງບໍ່ມຊ້ອນ. ຂະແໜງ ບໍລິການ ໄດ້ ເຕີບໂຕຢ່າງວ່ອງໄວໃນຊຸມປີຜ່ານມາ ກາຍເປັນຂະແໜງທີ່ປະກອບສ່ວນ ຫຼາຍສຸດເຂົ້າໃນ GDP ຂອງ ສປປ ລາວ. ຢ່າງໃດກໍ່ຕາມ, ຂະໜາດຂອງຂະແໜງບໍລິການ - ທີ 41 ສ່ວນຮ້ອຍຂອງ GDP ຕາມ ຕົວເລກໃນປີ 2014 — ຖືວ່າຍັງຢູ່ໃນລະດັບທີ່ນ້ອຍກວ່າການປະກອບ ສ່ວນຂອງຂະແໜງບໍລິການໃນປະເທດອື່ນໆ ທີ່ມີການພັດທະນາໃນລະດັບຄ້າຍຄືກັນ.

3. ໃນຂະນະທີ່ການສົ່ງອອກບໍລິການໄດ້ເພີ່ມສູງຂຶ້ນຫຼາຍ ແຕ່ກໍ່ຍັງຄົງສຸມໃສ່ການບໍລິການບາງ ດ້ານແບບດັ້ງເດີມ ໂດຍສະເພາະແມ່ນ ການບໍລິການດ້ານການຂົນສົ່ງ ແລະ ການເດີນທາງ. ການສົ່ງ ອອກບໍລິການ ໄດ້ເຕີບໂຕຈາກ 6,4 ສ່ວນຮ້ອຍຂອງຜົນຜະລິດບໍລິການທັງໝົດໃນປີ 2005 ມາເປັນ 6,9 ສ່ວນຮ້ອຍໃນປີ 2013. ຢ່າງໃດກໍ່ດີ, ການເອື່ອຍອີງຫຼາຍໃສ່ ສອງສາມຂົງເຂດບໍລິການດັ້ງເດີມ ນັ້ນໄດ້ເຮັດໃຫ້ກະຕ່າສິນຄ້າສົ່ງອອກດ້ານບໍລິການຂອງ ສປປ ລາວ ມີການຈຸ້ມຕົວຫຼາຍສຸດທຽບໃສ່ປະ ເທດອື່ນໆທີ່ມີລະດັບການພັດທະນາຄ້າຍຄືກັນ ແລະ ຍິ່ງເປັນການເພີ່ມຄວາມບອບບາງທາງເສດຖະ ກິດໃຫ້ປະເທດທີ່ສ່ຽງໄດ້ຮັບຜົນສະທ້ອນຈາກປະເຜດການກະທົບແບບສະເພາະຂະແໜງການ.

4. ຍ້ອນການສະໜອງບໍລິການທີ່ທັນສະໄໝຍັງມີບໍ່ພຽງພໍ, ການປະກອບສ່ວນໂດຍກົງຂອງການ ບໍລິການທີ່ທັນສະໄໝຍັງຄົງຢູ່ລະດັບຕ່ຳ ແລະ ປະກອບສ່ວນທາງອ້ອມ ທີ່ນອນຢູ່ໃນສິນຄ້າສົ່ງອອກຈາກ ຂະແໜງການຜະລິດກໍ່ຕ່ຳໄປນຳ. ເກືອບ 90 ສ່ວນຮ້ອຍຂອງປັດໃຈນຳເຂົ້າດ້ານບໍລິການທີ່ນຳໃຊ້ໂດຍ ຜູ້ຜະລິດ ແມ່ນມາຈາກການບໍລິການດ້ານການແຈກຢາຍ ແລະ ການຂົນສົ່ງ ໃນຂະນະຂົງເຂດບໍລິການທີ່ ທັນສະໄໝເຊັ່ນ: ບໍລິການດ້ານທຸລະກິດ, ການເງິນ, ປະກັນໄພ ແລະ ບໍລິການ ICT ປະກອບສ່ວນ ພຽງເລັກນ້ອຍເຂົ້າໃນການຜະລິດເພີ່ມມູນຄ່າ. ຕາມທຳມະດາແລ້ວ, ບໍລິສັດໃນຂະແໜງບໍລິການ ຖືເປັນ ຜູ້ສະໜອງສຳຄັນຂອງປັດໃຈນຳເຂົ້າລະຫວ່າງກາງໃຫ້ແກ່ຂະແໜງອື່ນໆ ໂດຍສະເພາະໃຫ້ບັນດາບໍລິສັດ ທີ່ເຮັດການຜະລິດ. ເມື່ອພິຈາລະນາເບິ່ງການເຊື່ອມໂຍງໄປທາງໜ້າເຫຼົ່ານີ້ແລ້ວ, ການປະກອບ ສ່ວນ ທັງໝົດຂອງ ຂະແໜງບໍລິການ ຈຶ່ງຢູ່ທີ່ 21 ສ່ວນຮ້ອຍຂອງສິນຄ້າສົ່ງອອກທັງໝົດຈາກ ສປປ ລາວ. ຢ່າງໃດກໍ່ຕາມ, ການປະກອບສ່ວນຂອງບໍລິການທີ່ທັນສະໄໝໃນສິນຄ້າສົ່ງອອກເພີ່ມມູນຄ່າ ຍັງຄົງຢູ່ ໃນລະດັບຕ່ຳຫຼາຍ. ການສະໜອງບໍລິການດ້ານການເງິນ ແລະ ໂທລະຄົມມະນາຄົມທີ່ບໍ່ພຽງພໍ - ເຊິ່ງກວມເອົາພຽງແຕ່ 3 ສ່ວນຮ້ອຍຂອງ ປັດໃຈນຳເຂົ້າດ້ານບໍລິການທັງໝົດທີ່ສະໜອງໃຫ້ແກ່ ຂະແໜງການຜະລິດ - ຍັງອາດຈະເປັນຂໍ້ຈຳກັດຕໍ່ການກະຈາຍໃຫ້ເກີດຄວາມຫຼາກຫຼາຍ ແລະ ການ ປັບປຸງບັນດາບໍລິສັດການຜະລິດ ໂດຍເປັນການສະກັດກັ້ນບໍລິສັດເຫຼົ່ານັ້ນ ບໍ່ໃຫ້ສາມາດໄຕ່ຂຶ້ນຕາມ ຕ່ອງໂສ້ມູນຄ່າ.

5. ການເຊື່ອມໂຍງລະຫວ່າງຂະແໜງບໍລິການ ແລະ ການຜະລິດ ຍັງອ່ອນນ້ອຍເມື່ອທຽບໃສ່ບັນດາປະເທດທີ່ມີ ລະດັບການພັດທະນາຄ້າຍຄືກັນ. ຢູ່ລາວ, ຂະແໜງບໍລິການ ພຽງແຕ່ປະກອບສ່ວນປະມານ 28 ສ່ວນຮ້ອຍ ຂອງປັດໃຈນຳເຂົ້າໃນເສດຖະກິດໃນດ້ານມູນຄ່າເພີ່ມຕາມຂໍ້ມູນປີ 2011, ເຊິ່ງເປັນສ່ວນແບ່ງທີ່ຕ່ຳອີງຕາມມາດຕະຖານສາກົນ, ເມື່ອທຽບໃສ່ປະເທດທີ່ມີລະດັບການພັດທະນາຄ້າຍຄືກັນ, ຂະແໜງບໍລິການຂອງເຂົາເຈົ້າ ປະກອບສ່ວນໃກ້ຄຽງ ຫຼື ສູງກວ່າ 40 ສ່ວນຮ້ອຍ. ໃນທາງກົງກັນຂ້າມ, ຂະແໜງກະສິກຳ, ພະລັງງານ ແລະ ບໍ່ແຮ່ ປະກອບສ່ວນ 68 ສ່ວນຮ້ອຍຂອງປັດໃຈນຳເຂົ້າທີ່ພາຍໃນສະໜອງ ຂະນະທີ່ຂະແໜງການຜະລິດ ປະກອບສ່ວນ ພຽງແຕ່ 6 ສ່ວນຮ້ອຍ. ຢູ່ ສປປ ລາວ, ຂະແໜງບໍລິການ ຖືກນຳໃຊ້ເປັນປັດໃຈນຳເຂົ້າສຳລັບ ການຜະລິດສິນຄ້າສົ່ງອອກ ຫຼາຍກວ່າເປັນປັດໃຈນຳເຂົ້າສຳລັບການຜະລິດຜະລິດຕະພັນຕ່າງໆເພື່ອຮັບໃຊ້ ຕະຫຼາດພາຍໃນ. ທັງກິດຈະກຳເພື່ອສົ່ງອອກ ແລະ ເພື່ອຮັບໃຊ້ຕະຫຼາດພາຍໃນ, ຂະແໜງການຜະລິດຂອງ ສປປ ລາວ ມີລະດັບການເອື່ອຍອີງໜ້ອຍໃສ່ຂະແໜງບໍລິການ ເມື່ອທຽບໃສ່ປະເທດອື່ນໆທີ່ມີລະດັບການພັດທະນາຄ້າຍຄືກັນ.

6. ການປັບປຸງຄຸນະພາບ ແລະ ຄວາມຫລາກຫລາຍຂອງການບໍລິການ ເປັນສິ່ງຈຳເປັນໃຫ້ໄດ້ຮັບຜົນປະໂຫຍດທີ່ວະລະບົບເສດຖະກິດເພື່ອການຍົກລະດັບສະມັດຕະພາບດ້ານການຜະລິດ ແລະ ຄວາມສາມາດໃນການແຂ່ງຂັນ. ການສະໜອງປັດໃຈການຜະລິດທີ່ບໍ່ພຽງພໍຈາກຂະແໜງບໍລິການຢູ່ ສປປ ລາວ ກາຍເປັນການກີດໜ່ວງການຜະລິດສິນຄ້າທີ່ນຳໃຊ້ບັນດາບໍລິການຕ່າງໆເຂົ້າໃນການ ຜະລິດ. ສິ່ງຄົ້ນພົບຂອງພວກເຮົາ ຊີ້ໃຫ້ເຫັນວ່າ: ມີການເຊື່ອມໂຍງສູງລະຫວ່າງຄຸນະພາບຂອງບໍລິການທີ່ເປັນກະດູກສັນຫຼັງ ແລະ ຜະລິດຕະພາບຂອງບໍລິສັດຢູ່ ສປປ ລາວ ກ່ຳຄື ຢູ່ໃນປະເທດອື່ນໆພາຍໃນພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ. ຜົນການເຄື່ອນໄຫວຂອງບໍລິສັດຢູ່ ສປປ ລາວ ຍິ່ງຖືກກະທົບໃນທາງລົບຈາກສະພາບບໍລິການຂົນສົ່ງ ແລະ ສະໜອງໄຟຟ້າທີ່ມີຄຸນະພາບຕ່ຳ. ອີງຕາມຜົນໄດ້ຮັບຈາກການວິເຄາະຂອງພວກເຮົາ, ສິ່ງທ້າທາຍ ທີ່ມີໃນບໍລິການຂົນສົ່ງ ໄດ້ສົ່ງຜົນກະທົບໃນທາງລົບຕໍ່ຜະລິດຕະພາບ. ແຕ່ບໍ່ມີຫຼັກຖານສະຫຼຸບທີ່ໜັກແໜ້ນ ກ່ຽວກັບຂໍ້ຈຳກັດໃນການເຂົ້າເຖິງບໍລິການດ້ານການເງິນ ແລະ ຜົນກະທົບທາງລົບຂອງບັນຫາດັ່ງກ່າວທີ່ມີຕໍ່ຜະລິດຕະພາບ. ໃນຂະນະທີ່ບໍລິສັດທີ່ມີຜະລິດຕະພາບຫຼາຍສຸດ ມີທ່າອ່ຽງທີ່ຈະສະແດງຄຳເຫັນຫຼາຍກ່ຽວກັບບັນຫາການສະໜອງບໍລິການດ້ານການເງິນທີ່ບໍ່ພຽງພໍ ແຕ່ເມື່ອພິຈາລະນາເບິ່ງມາດຕະການພາວະວິໄຈໃນການເຂົ້າເຖິງບໍລິການດ້ານການເງິນ ຫຼື ແຫຼ່ງທຶນແລ້ວ ພວກເຮົາເຫັນວ່າ: ບໍລິສັດທີ່ສາມາດເຂົ້າເຖິງແຫຼ່ງທຶນຈາກທະນາຄານໄດ້ຫຼາຍກວ່າໝູ່ ນັ້ນມີທ່າອ່ຽງເປັນບໍລິສັດທີ່ມີຜະລິດຕະພາບສູງກວ່າບໍລິສັດອື່ນ.

DAHAN

ຂໍ້ສະເໜີແນະທາງດ້ານນະໂຍບາຍ

7. ຄຳແນະນຳຕົ້ນຕໍດ້ານນະໂຍບາຍຈາກບົດລາຍງານສະບັບນີ້ ມີເປົ້າໝາຍເລັ່ງໃສ່ເພີ່ມການແຂ່ງຂັນໃນຂະແໜງບໍລິການ, ຫຼຸດຜ່ອນລະບຽບການທີ່ມີລັກສະນະບິດເບືອນ ແລະ ເປີດຂະແໜງບໍລິການໃຫ້ຕ່າງປະເທດ ສາມາດເຂົ້າມີສ່ວນຮ່ວມໄດ້, ສ້າງທັກສະຄວາມຮູ້ທັງໃນລະດັບບຸກຄົນ ແລະ ບໍລິສັດ, ແລະ ລົງທຶນໃສ່ພື້ນຖານໂຄງລ່າງກາຍະພາບ ແລະ ທີ່ບໍ່ແມ່ນກາຍະພາບ ເພື່ອສົ່ງເສີມການພັດທະນາ ຂອງຂະແໜງບໍລິການ. ເວົ້າສະເພາະ, ຈຳເປັນຕ້ອງເອົາໃຈໃສ່ເພີ່ມເປັນພິເສດໃສ່ຂົງເຂດດັ່ງຕໍ່ໄປນີ້:

8. ເລີ່ມການຈັດຕັ້ງປະຕິບັດໄວຂຶ້ນ ບັນດາພັນທະໃນສົນທິສັນຍາກັບອົງການການຄ້າໂລກ (WTO) ແລະ ສົນທິສັນຍາກອບການຄ້າດ້ານການບໍລິການຂອງອາຊຽນ (AFAS) ເພື່ອຮັບປະກັນລະບອບ ການຄ້າ ແລະ ການລົງທຶນທີ່ເປີດເສລີໃຫ້ແກ່ຂະແໜງບໍລິການ.

- **ເປີດກວ້າງຂະແໜງບໍລິການ:** ນີ້ເປັນສ່ວນໜຶ່ງ ແລະ ທັງໝົດຂອງນະໂຍບາຍການຄ້າທີ່ເສີມຂະ ຫຍາຍການເຕີບໂຕທາງເສດຖະກິດແບບຮອບດ້ານ. ຢ່າງໃດກໍ່ດີ, ຄຳໝັ້ນສັນຍາຂອງ ສປປລາວພາຍໃຕ້GATSເຫັນວ່າ: ມີຂອບເຂດປົກຄຸມດ້ານຂະແໜງບໍລິການທີ່ຂ່າວຕ່ຳໂດຍ ທຽບຖານ ແລະ ມີພັນທະແບບຜິວເຜີນ. ມີຄວາມຈຳເປັນຮີບດ່ວນສຳລັບ ສປປ ລາວ ທີ່ຕ້ອງ ເລີ່ມຈັດຕັ້ງປະຕິບັດຄຳໝັ້ນສັນຍາຂອງຕົນໃນຂະແໜງການເງິນ ແລະ ໂທລະຄົມມະນາຄົມ ແລະ ຕ້ອງເລີ່ມພິຈາລະນາເປີດຂະແໜງແຈກຢາຍສິນຄ້າ ແລະ ການຂາຍຍ່ອຍ. ຂໍ້ຈຳກັດ ຕໍ່ການເຂົ້າຮ່ວມ ຂອງບໍລິສັດຕ່າງປະເທດໃນຫຼາກຫຼາຍກິດຈະກຳ ການທ່ອງທ່ຽວ ຕົວຢ່າງ: ການເຮັດທຸລະກິດ ເຮືອນພັກແມ່ນຍັງຄົງມີຢູ່. ໃນຂະແໜງຂົນສົ່ງ, ການເພີ່ມຄວາມຍືດຢຸ່ນ ຂັ້ນຕອນການອອກໃບ ອະນຸຍາດ ອາດຈະຊ່ວຍບໍລິສັດຕ່າງໆທີ່ອາດຈະຢາກລວມເອົາກິດຈະ ກຳດັ່ງກ່າວເຂົ້າໃນທຸລະກິດໃຈກາງຂອງເຂົາເຈົ້າ ຕົວຢ່າງເຊັ່ນ: ບໍລິສັດ ໃນຂະແໜງບໍແຮ່.

- **ພັນທະໃນການເປີດເສລີດ້ານການຄ້າບໍລິການໃນລະດັບພາກພື້ນ (ທີ່ມີກັບ AFAS) ຈຳເປັນ ຕ້ອງເຮັດໃຫ້ສອດຄ່ອງກັບບັນດາພັນທະໃນສົນທິສັນຍາຫຼາຍຝ່າຍ (ທີ່ມີກັບ GATS/ WTO).** ການເຊື່ອມໂຍງພາກພື້ນໃນຂະແໜງບໍລິການ ມີທ່າແຮງເປັນພື້ນຖານໃຫ້ແກ່ການ ເຊື່ອມໂຍງໃນວົງກວ້າງກັບຕະຫຼາດໂລກ. ຢ່າງໃດກໍ່ຕາມ, ເຖິງວ່າ: ສປປ ລາວ ມີຄວາມຄືບໜ້າ ຫຼາຍໃນການຫັນເປັນເສລີພາຍໃຕ້ແວດລ້ອມລະດັບພາກພື້ນ, ແຕ່ກໍ່ຍັງມີຄວາມບໍ່ສອດຄ່ອງ ຈຳນວນໜຶ່ງ (ຕ.ຢ: ເງື່ອນໄຂການຮັບຮອງ ໃນແວດລ້ອມລະດັບພາກພື້ນ, ແຕ່ພັດບໍ່ມີພາຍ ໃຕ້ແວດລ້ອມຫຼາຍຝ່າຍ; ເງື່ອນໄຂກຳມະສິດຕ່ຳສຸດຂອງຕ່າງປະເທດໃນແວດລ້ອມລະດັບ

ພາກພື້ນ ແຕ່ພົດບໍ່ມີໃນແວດລ້ອມຫຼາຍຝ່າຍ, ແລະ ອື່ນໆ). ນີ້ ສະແດງໃຫ້ເຫັນວ່າ: ຍຸດທະສາດ ເຈລະຈາການຄ້າ ຈະມີປະສິດທິຜົນຫຼາຍກວ່ານີ້ ຖ້າຫາກຖືກລວມສູນ, ພ້ອມທັງມີກົນໄກທີ່ ເຂັ້ມແຂງກວ່າເດີມສຳລັບການຂໍຄຳປຶກສາ ແລະ ການປະສານງານທົ່ວບັນດາກະຊວງກ່ຽວ ຂ້ອງ.

9. ສົມທົບໃສ່ການເປີດກວ້າງດ້ວຍການປັບປຸງລະບຽບກົດໝາຍທີ່ຮັດກຸມເພື່ອຮັບປະກັນຜົນ ປະໂຫຍດດ້ານການຄ້າ ແລະ ການລົງທຶນຕ່າງໆ. ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການເປີດກວ້າງ ທີ່ເພີ່ມຂຶ້ນຕໍ່ການຄ້າ ແລະ ການລົງທຶນ, ຈຳເປັນທີ່ຕ້ອງມີສະພາບແວດລ້ອມດ້ານລະບຽບກົດໝາຍ ທີ່ເອື້ອອຳນວຍ, ໂປ່ງໃສ ແລະ ສາມາດຄາດຄະເນໄດ້. ຕົວຢ່າງ: ໃນຂະແໜງໂທລະຄົມມະນາຄົມ, ສປປ ລາວ ມີພັນທະຕໍ່ສາກົນທີ່ມີການປັບປຸງລະບຽບກົດໝາຍ ທີ່ມີລັກສະນະທ້າທາຍຄວາມສາມາດ. ເພື່ອໃຫ້ບັນລຸຜົນປະໂຫຍດດັ່ງກ່າວ, ເປັນສິ່ງຈຳເປັນສຳລັບ ສປປ ລາວ ທີ່ຕ້ອງເລີ່ມສ້າງພື້ນຖານດ້ານ ການຈັດຕັ້ງ ແລະ ລະບຽບກົດໝາຍ ທີ່ສອດຄ່ອງກັບເອກະສານແມ່ບົດຂະແໜງໂທລະຄົມມະນາຄົມ ຂອງ ອົງການການຄ້າໂລກ (WTO) ທີ່ກຳນົດບັນດາຫຼັກການ ແລະ ເງື່ອນໄຂພື້ນຖານທາງດ້ານ ການຈັດຕັ້ງ ເພື່ອຄຸ້ມຄອງຂະແໜງການໂທລະຄົມມະນາຄົມ. ນີ້ ຕ້ອງລວມເອົາດ້ານຕ່າງໆເຊັ່ນ: ກົດລະບຽບວ່າດ້ວຍການເຂົ້າເຖິງ ແລະ ນຳໃຊ້ພື້ນຖານໂຄງລ່າງດ້ານໂທລະຄົມມະນາຄົມ, ຄວາມເປັນ ເອກະລາດຂອງອົງການຄຸ້ມຄອງ ແລະ ກົດລະບຽບວ່າດ້ວຍພຶດຕິກຳຕ້ານການແຂ່ງຂັນ. ປະຈຸບັນ, ຮ່າງດຳລັດຂອງລັດຖະບານ ພວມໄດ້ຮັບການຄົ້ນຄວ້າພິຈາລະນາ (ໃນເດືອນກຸມພາ 2016).

10. ສະໜັບສະໜຸນການຈັດຕັ້ງປະຕິບັດປະຕິຮູບຕ່າງໆໃນຂະແໜງບໍລິການດ້ວຍການສ້າງຄວາມ ສາມາດໃຫ້ຂະແໜງການກ່ຽວຂ້ອງໃຫ້ມີຄວາມພ້ອມດ້ານງົບປະມານ ແລະ ພະນັກງານທີ່ມີຄວາມຮູ້ ຄວາມສາມາດ. ພື້ນຖານທາງດ້ານລະບຽບກົດໝາຍທີ່ຮັດກຸມ ແລະ ໂປ່ງໃສ ຈະໃຫ້ຜົນໄດ້ຮັບພຽງບາງ ສ່ວນ ຖ້າຄວາມສາມາດທາງດ້ານຈັດຕັ້ງໃນການຄຸ້ມຄອງລັດຫາກບໍ່ເຂັ້ມແຂງ. ງົບປະມານທີ່ຈຳກັດ ແລະ ພະນັກງານທີ່ບໍ່ໄດ້ຮັບການຝຶກອົບຮົມພຽງພໍ ເຮັດໃຫ້ກົງຈັກການຈັດຕັ້ງຂອງລັດຕ່າງໆທີ່ກ່ຽວ ຂ້ອງ ບໍ່ສາມາດແກ້ໄຂສິ່ງທ້າທາຍດ້ານລະບຽບກົດໝາຍຕ່າງໆ ໄດ້ຢ່າງມີປະສິດທິຜົນ. ນອກຈາກນັ້ນ, ເພື່ອສະໜັບສະໜຸນການຈັດຕັ້ງປະຕິບັດນິຕິກຳທີ່ໂປ່ງໃສ, ເປັນສິ່ງທີ່ໄດ້ປຽບ ທີ່ຄວນສ້າງບົດແນະນຳ ກ່ຽວກັບບັນດາກົດໝາຍທີ່ຕິດພັນກັບຫລາຍຂະແໜງການໃຫ້ເປັນຮັດກຸມງ່າຍຕໍ່ຜູ້ນຳໃຊ້ ໂດຍສະເພາະ ພະນັກງານລັດຖະກອນ ແລະ ມວນຊົນ ເພື່ອຮັບປະກັນຄວາມເຂົ້າໃຈເປັນເອກະພາບກ່ຽວກັບກົດລະ ບຽບກົດໝາຍ ແລະ ລະບຽບການຕ່າງໆ.

11. ສະໜັບສະໜຸນການສ້າງຄວາມຫລາກຫລາຍພາກສ່ວນເສດຖະກິດ ດ້ວຍການພັດທະນາຊັບພະຍາກອນມະນຸດໃຫ້ເປັນທຶນ. ການສ້າງທັກສະຄວາມຮູ້ເປັນສິ່ງທີ່ຈຳເປັນ ຖ້າ ສປປ ລາວ ຕ້ອງການເຂົ້າສູ່ຂະແໜງບໍລິການ ແລະ ການຜະລິດທີ່ມີຄວາມສະຫຼັບຊັບຊ້ອນທັນສະໄໝຂຶ້ນກວ່າເດີມ. ຕົວຢ່າງ: ເພື່ອປັບປຸງຂະແໜງ ຕັດຫຍິບ, ພາກທຸລະກິດຈຳເປັນຕ້ອງອາໄສກຳລັງແຮງງານທີ່ສາມາດອອກແບບໄດ້ເອງ, ເຮັດໜ້າທີ່ຄຸ້ມຄອງດ້ານການບັນຊີ ແລະ ການຕະຫຼາດເອງ. ບັນຫາການຂາດແຮງງານທີ່ມີສີມືເປັນຂໍ້ຈຳກັດຮ້າຍແຮງຕໍ່ພາກທຸລະກິດ ຈາກການສຳຫລວດບັນດາບໍລິສັດຕ່າງໆໃນ ສປປ ລາວ. ສິ່ງຈຳເປັນ ແມ່ນ ຄວນມີນະໂຍບາຍໄລຍະຍາວທີ່ມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃຫ້ການສຶກສາຂັ້ນພື້ນຖານ, ປັບປຸງຫຼັກສູດການຮຽນການສອນ ເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການຂອງຕະຫຼາດ ແລະ ປັບການຝຶກອົບຮົມວິຊາຊີບໃຫ້ສອດຄ່ອງກັບຄວາມຕ້ອງການຂອງພາກທຸລະກິດ. ສຳລັບໄລຍະສັ້ນ, ການອຳນວຍຄວາມສະດວກໃຫ້ການເຂົ້າມາຂອງຕ່າງປະເທດທີ່ມີທັກສະຄວາມຮູ້ກ່ຽວຂ້ອງ ອາດຈະຊ່ວຍແກ້ໄຂບັນດາຂໍ້ຈຳກັດເຫຼົ່ານັ້ນໄດ້ໃນໄລຍະຊົ່ວຄາວ.

12. ລົງທຶນໃສ່ພື້ນຖານໂຄງລ່າງດ້ານວັດຖຸ ແລະ ພື້ນຖານດ້ານເຕັກນິກ, ໂດຍສະເພາະໃນຂະແໜງຂົນສົ່ງ ແລະ ພະລັງງານ ເຊິ່ງລວມທັງໄຟຟ້າ, ນ້ຳ ແລະ ການເຊື່ອມຕໍ່ທາງອິນເຕີເນັດ. ການພັດທະນາຕາໜ່າງຖະໜົນຫົນທາງ ຖືເປັນສິ່ງຈຳເປັນໃນການຫຼຸດຕົ້ນທຶນການຂົນສົ່ງ ເຊິ່ງມີບົດບາດສຳຄັນໃນການຫລຸດຕົ້ນທຶນຂອງພາກທຸລະກິດ. ນອກຈາກນັ້ນ, ພື້ນຖານໂຄງລ່າງໃນການກະຈາຍພະລັງງານ (ຕ.ຢ: ລະບົບຕາຄ່າຍສາຍສົ່ງໄຟ) ຈຳເປັນຕ້ອງໄດ້ຮັບການສ້າງຄວາມເຂັ້ມແຂງເພື່ອຮັບປະກັນການສະໜອງທີ່ມີສະຖຽນລະພາບ. ໃນດ້ານການເຊື່ອມຕໍ່ທາງອິນເຕີເນັດ, ເປັນເລື່ອງສຳຄັນທີ່ຕ້ອງມີການຍົກລະດັບພື້ນຖານດ້ານນິຕິກຳ ແລະ ການປະຕິບັດທີ່ເທົ່າທຽມກັນບໍ່ມີການຈຳແນກ ແລະ ມີຄວາມເປັນເອກະພາບລະຫວ່າງບັນດາບໍລິສັດຜູ້ສະໜອງບໍລິການອິນເຕີເນັດ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເພີ່ມການແຂ່ງຂັນແລະຍົກລະດັບປະສິດທິພາບໃນການປະຕິບັດງານຂອງພາກທຸລະກິດ. ສຸດທ້າຍ, ຕ້ອງລົບລ້າງອາກອນຟຸມເຟືອຍຕໍ່ການນຳໃຊ້ ແລະ ສະໜອງອິນເຕີເນັດ.